ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0080/ກປ

ນະຄອນຫຼວງວຽງຈັນ, ວັນທີ 19 JUN 2012

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍລະບຽບການນຳເຂົ້າ, ການຄຸ້ມຄອງ ແລະ ການນຳໃຊ້ ເຄື່ອງຈັກຕັດໄມ້

- ອີງຕາມກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມດຳລັດ ວ່າດ້ວຍການນຳເຂົ້າ ແລະສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011;
- ອີງຕາມດຳລັດ ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ ລົງວັນທີ 07 ກໍລະກົດ 2009;
- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007.

### ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1:** ຈຸດປະສົງ

ລະບຽບການສະບັບນີ້ສ້າງຂຶ້ນ ເພື່ອກຳນົດຫຼັກການ, ຂັ້ນຕອນ ແລະ ມາດຕະການ ການນຳເຂົ້າ, ການຄຸ້ມຄອງ ແລະ ການນຳໃຊ້ເຄື່ອງຈັກຕັດໄມ້ ໃຫ້ສອດຄ່ອງຕາມລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 2:** ອະທິບາຍຄຳສັບ

ເຄື່ອງຈັກຕັດໄມ້ ໝາຍເຖິງເຄື່ອງຈັກທຸກຊະນິດ ທີ່ນຳໃຊ້ຕັດໄມ້, ປ້ຳຕົ້ນໄມ້ ແລະ ບັ່ນທອນໄມ້ ລວມມີ ເລື່ອຍມື, ເລື່ອຍຈັກ (ເລື່ອຍໂສ້) ທີ່ແລ່ນດ້ວຍເຊື້ອເພີງ (ນ້ຳມັນ) ແລະ ໄຟຟ້າ ພ້ອມດ້ວຍສ່ວນປະກອບ-ອຸປະກອນ ຂອງເຄື່ອງຈັກຕັດໄມ້ຊຶ່ງໄດ້ລະບຸໄວ້ໃນລະຫັດພາສີນຳເບີ 8467.81.00, 8467.89.00 ແລະ 8467.91.10 ຂອງສາລະບານອັດຕາພາສີ ສປປ ລາວ.

## ພາກທີ II
## ການນຳເຂົ້າເຄື່ອງຈັກຕັດໄມ້

**ມາດຕາ 3: ສິດ ແລະ ເງື່ອນໄຂການນຳເຂົ້າເຄື່ອງຈັກຕັດໄມ້**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ມີສິດນຳເຂົ້າ ເຄື່ອງຈັກຕັດໄມ້ ໂດຍຕ້ອງປະຕິບັດ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 4: ການຂໍອະຍາດນຳເຂົ້າເຄື່ອງຈັກຕັດໄມ້**

ການນຳເຂົ້າເຄື່ອງຈັກຕັດໄມ້ ຕ້ອງໄດ້ຮັບການອະນຸຍາດນຳເຂົ້າຈາກກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້. ການປະກອບເອກະສານຂໍອະນຸຍາດນຳເຂົ້າເຄື່ອງຈັກຕັດໄມ້ ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ,
2. ສຳເນົາໃບທະບຽນວິສາຫະກິດ ຫຼື ສຳເນົາໃບທະບຽນສຳປະທານ ທີ່ຖືກຕ້ອງຕາມລະບຽບກົດໝາຍ ສຳລັບວິສາຫະກິດທີ່ຢູ່ ສປປ ລາວ ແລະ ສຳເນົາໃບທະບຽນວິສາຫະກິດ ອອກໃຫ້ໂດຍທາງການ ຂອງປະເທດທີ່ກ່ຽວຂ້ອງ ທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດທີ່ບໍ່ຢູ່ໃນ ສປປ ລາວ).

ໃນກໍລະນີເອກະສານເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນ ຈາກສຳນັກງານທະບຽນສານຂອງ ສປປ ລາວ.

**ມາດຕາ 5: ການອອກໃບອະນຸຍາດນຳເຂົ້າເຄື່ອງຈັກຕັດໄມ້**

ການອອກ, ການປ່ຽນແປງ ແລະ ອາຍຸຂອງໃບອະນຸຍາດນຳເຂົ້າເຄື່ອງຈັກຕັດໄມ້ ໃຫ້ປະຕິບັດຕາມດຳລັດ 180/ນຍ ລົງວັນທີ 7 ມິຖຸນາ 2009 ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ.

**ມາດຕາ 6: ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການອອກ ແລະ ການປ່ຽນແປງໃບອະນຸຍາດນຳເຂົ້າເຄື່ອງຈັກຕັດໄມ້ ແມ່ນໃຫ້ປະຕິບັດຕາມລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ວາງອອກໃນແຕ່ລະໄລຍະ.

**ມາດຕາ 7: ການແຈ້ງເອກະສານ ໃນເວລານຳເຂົ້າເຄື່ອງຈັກຕັດໄມ້**

ໃນເວລານຳເຂົ້າເຄື່ອງຈັກຕັດໄມ້, ຜູ້ທີ່ໄດ້ຮັບອະນຸຍາດນຳເຂົ້າ ຕ້ອງນຳເອົາເອກະສານແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານ ແລະ ເຈົ້າໜ້າທີ່ອື່ນໆ ທີ່ກ່ຽວຂ້ອງ.

## ພາກທີ III
## ການຄຸ້ມຄອງ ແລະ ນຳໃຊ້ເຄື່ອງຈັກຕັດໄມ້

**ມາດຕາ 8: ການຂຶ້ນທະບຽນຈັກຕັດໄມ້**

1. ເຄື່ອງຈັກຕັດໄມ້ ທີ່ນຳເຂົ້າມາແລ້ວ ຕ້ອງໄປຂຶ້ນທະບຽນນຳໃຊ້ ນຳພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງ.

2. ການຂຶ້ນທະບຽນເຄື່ອງຈັກຕັດໄມ້ ແມ່ນອອກໃຫ້ເປັນສະເພາະແຕ່ລະເຄື່ອງຈັກ ແລະ ມີກຳນົດໃຊ້ໄລຍະ 01 ປີ, ຖ້າໃບທະບຽນໝົດອາຍຸ ແມ່ນໃຫ້ໄປຕໍ່ໃໝ່.

**ມາດຕາ 9:** ການຄຸ້ມຄອງ ແລະ ນຳໃຊ້ເຄື່ອງຈັກຕັດໄມ້

1. ກ່ອນຈະນຳໃຊ້ເຄື່ອງຈັກຕັດໄມ້ແຕ່ລະຄັ້ງ ຕ້ອງໄດ້ແຈ້ງຈຸດປະສົງ ທີ່ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງ ເພື່ອຕິດຕາມ ແລະ ກວດກາ. ໃນເວລານຳໃຊ້ ຫຼື ເຄື່ອນຍ້າຍເຄື່ອງຈັກຕັດໄມ້ແຕ່ລະຄັ້ງ ຕ້ອງຖືໃບທະບຽນເຄື່ອງຈັກນັ້ນໆໄປພ້ອມ ເພື່ອສະດວກໃນການຕິດຕາມກວດກາ ຂອງເຈົ້າໜ້າທີ່ປ່າໄມ້.
2. ສຳລັບເຄື່ອງຈັກຕັດໄມ້ ລວມທັງອາໄຫຼ່ ຫຼື ສ່ວນປະກອບ ທີ່ນຳເຂົ້າມາ ເພື່ອຮັບໃຊ້ໂຄງການຕ່າງໆ ທີ່ລັດຖະບານອະນຸມັດ ຫຼືມີສັນຍາຮ່ວມກັນນັ້ນ ຕ້ອງໄດ້ປະຕິບັດ ຕາມການຕົກລົງລະຫວ່າງສອງຝ່າຍ ບົນພື້ນຖານການກວດກາ ແລະ ຕິດຕາມ ຈາກເຈົ້າໜ້າທີ່ປ່າໄມ້.
3. ກໍລະນີທີ່ເຄື່ອງຈັກເປ່ເພ ນຳໃຊ້ບໍ່ໄດ້ ຫຼື ບໍ່ສາມາດສ້ອມແປງໄດ້, ບໍ່ມີເອກະສານນຳເຂົ້າ ແລະ ບໍ່ມີໃບທະບຽນ ແຕ່ເອົາໄປນຳໃຊ້ ກ່ອນໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ແມ່ນມອບໃຫ້ຂະແໜງປ່າໄມ້ປະຈຳແຕ່ລະແຂວງ ແລະ ນະຄອນຫຼວງ ເກັບຮັກສາເຂົ້າໄວ້ສາງ, ຫ້າມເອົາໄປນຳໃຊ້.

## ພາກທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 10:** ການຈັດຕັ້ງປະຕິບັດ

ບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ, ຫົວໜ່ວຍທຸລະກິດ ລວມທັງບຸກຄົນ ນິຕິບຸກຄົນ, ການຈັດຕັ້ງ ແລະລວມໝູ່ ຈົ່ງຮັບຮູ້ ແລະໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້. ມອບໃຫ້ກົມປ່າໄມ້, ກົມກວດກາປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເປັນເຈົ້າການເຜີຍແຜ່ເຊື່ອມຊຶມ, ຊຸກຍູ້ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 11:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 0005/ກປ ລົງວັນ 9 ມັງກອນ 2012.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ບ່ອນນຳສົ່ງ:

| | | |
|---|---|---|
| 1. ຫ້ອງວ່າການລັດຖະບານ | 01 ສະບັບ | (ເພື່ອຊາບ); |
| 2. ກະຊວງອຸດສາຫະກຳ ແລະການຄ້າ | 01 ສະບັບ | (ເພື່ອຊາບ); |
| 3. ກະຊວງການເງິນ | 01 ສະບັບ | (ເພື່ອຊາບ); |
| 4. ຫ້ອງວ່າການປົກຄອງແຂວງ, ນະຄອນຫລວງ ບ່ອນລະ | 01 ສະບັບ | (ເພື່ອຊ່ວຍຊີ້ນຳ); |
| 5. ຫ້ອງການກະຊວງ ກປ | 01 ສະບັບ | (ເພື່ອຊາບ); |
| 6. ກົມປ່າໄມ້ | 01 ສະບັບ | (ເພື່ອຕິດຕາມ); |
| 7. ກົມກວດກາປ່າໄມ້ | 01 ສະບັບ | (ເພື່ອຕິດຕາມ); |
| 8. ເກັບມ້ຽນ | 01 ສະບັບ. | |

ກະຊວງກະສິກຳ ແລະ ປ່າໄມ້ — ລັດຖະມົນຕີ

ວິໄລວັນ ພົມເຂ